ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ການເງິນ

ຄັງເງິນແຫ່ງຊາດ

1054

ເລກທີ ________/ກງ.ຄງຊ

ນະຄອນຫຼວງວຽງຈັນ, ວັນທີ 15 MAR 2018

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງ ປຶ້ມຄູ່ມື ການບັນຊີ

## ຂອງ ຄັງເງິນແຫ່ງຊາດ ປະຈຳ ແຂວງ-ນະຄອນຫຼວງ ແລະ ເມືອງ

- ອີງຕາມ ກົດໝາຍ ວ່າດ້ວຍການບັນຊີ (ສະບັບປັບປຸງ) ສະບັບເລກທີ 047/ສພຊ, ລົງວັນທີ 26 ທັນວາ 2015;
- ອີງຕາມ ດຳລັດ ວ່າດ້ວຍຄັງເງິນແຫ່ງຊາດ ສະບັບເລກທີ 259/ນຍ, ລົງວັນທີ 10 ມິຖຸນາ 2010;
- ອີງຕາມ ຂໍ້ຕົກລົງຂອງຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄັງເງິນແຫ່ງຊາດ ສະບັບເລກທີ 2833/ກງ, ວັນທີ 22 ສິງຫາ 2017;
- ອີງຕາມ ການເຫັນດີເປັນເອກະພາບ ພາຍໃນຄັງເງິນແຫ່ງຊາດ.

**ຫົວໜ້າຄັງເງິນແຫ່ງຊາດ ຕົກລົງ:**

**ມາດຕາ 01 :** ເຫັນດີ ຮັບຮອງເອົາປຶ້ມຄູ່ມື ການບັນຊີ ຂອງຄັງເງິນແຫ່ງຊາດ ປະຈຳ ແຂວງ-ນະຄອນຫຼວງ ແລະ ເມືອງ ເພື່ອເປັນພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດວຽກງານການບັນຊີຂອງ ຄັງເງິນແຫ່ງຊາດ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;

**ມາດຕາ 02 :** ມອບໃຫ້ພະແນກບັນຊີສັງລວມ ເປັນຜູ້ຊີ້ນຳລະອຽດ ໃນການຈັດຕັ້ງປະຕິບັດປຶ້ມຄູ່ມືດັ່ງກ່າວ ໃນການເຜີຍແຜ່, ແນະນຳ, ຈັດຕັ້ງ, ຊຸກຍູ້ຕິດຕາມ ແລະ ກວດກາປະເມີນຜົນ ໃຫ້ໄດ້ຮັບຜົນດີ. ຜ່ານການຈັດຕັ້ງປະຕິບັດ ຫາກເນື້ອໃນໃດບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ໃຫ້ຮີບຮ້ອນປັບປຸງແກ້ໄຂໃຫ້ທັນຕາມກຳນົດເວລາ;

**ມາດຕາ 03 :** ມອບໃຫ້ບັນດາ ພະແນກການອ້ອມຂ້າງ ຄັງເງິນແຫ່ງຊາດ, ຄັງເງິນແຫ່ງຊາດ ປະຈຳ ແຂວງ-ນະຄອນຫຼວງ ແລະ ເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດປຶ້ມຄູ່ມືດັ່ງກ່າວ ໃນຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງເຂັ້ມງວດ;

**ມາດຕາ 04 :** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າຄັງເງິນແຫ່ງຊາດ,

ວັນພອນ ພົມມະສອນ